# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 9
## Prohibition in investment
## ຂໍ້ຫ້າມກ່ຽວກັບການລົງທຶນ

ໃນບົດຮຽນນີ້, ຢາກໃຫ້ເຂົ້າໃຈບັນຫາທີ່ລັດຖະບານບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການ ຈັດຕັ້ງເຄື່ອນໄຫວກ່ຽວກັບບັນຫາການລົງທຶນທີ່ກົດໝາຍບໍ່ອະນຸຍາດ.

**1. ຂໍ້ຫ້າມທົ່ວໄປກ່ຽວກັບການລົງທຶນ**

ສຳລັບຂໍ້ຫ້າມທົ່ວໄປນີ້ແມ່ນສາມາດໃຊ້ໄດ້ກັບທຸກເປົ້າໝາຍຄື:ຫ້າມບຸກຄົນ ແລະ ການຈັດຕັ້ງມີການກະທຳທີ່ກ່ຽວກັບບັນຫາການລົງທຶນໃນທຸກກໍລະນີລຸ່ມນີ້:

- ອະນຸມັດ, ດຳເນີນທຸລະກິດທີ່ຫວງຫ້າມ ຫຼື ບໍ່ຖືກຕ້ອງຕາມລະບຽບກົດໝາຍ ເຊັ່ນ: ບັນດາສານເສບຕິດ, ຄ້າຂາຍໂສເພນີ, ຄ້າຂາຍມະນຸດ, ຄ້າຂາຍສັດທີ່ຫວງຫ້າມ....;
- ຂັດຂວາງການສົ່ງເສີມການລົງທຶນ ຢູ່ ສປປ ລາວ ທຸກຮູບການ ເຊັ່ນ: ແກ່ຍາວເອກະສານ, ຂັ້ນຕອນການລົງທຶນ, ຊື້ຈ້າງສິນບົນ, ໃສ່ຮ້າຍປ້າຍສີ, ໂຄສະນາບິດເບືອນ, ແຂ່ງຂັນບໍ່ໂປ່ງໃສ...;
- ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**2. ຂໍ້ຫ້າມສຳລັບພະນັກງານກ່ຽວກັບການລົງທຶນ**

ຫ້າມພະນັກງານ ມີການກະທຳ ດັ່ງນີ້:

**+ ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ**

ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ແມ່ນການອີງໃສ່ຖານະຕຳແໜ່ງ, ສິດອຳນາດ,ໜ້າທີ່ຂອງຕົນ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ[1].

ໃນສະພາບຕົວຈິງປັດຈຸບັນ ພວກເຮົາຈະ ພົບເຫັນພະນັກງານລັດຈຳນວນໜຶ່ງ ຍັງຖືເບົາຕໍ່ການປະຕິບັດໜ້າທີ່ຂອງຕົນ, ເປັນຕົ້ນແມ່ນເມົາໃນ ຕຳແໜ່ງຕົນເອງ, ໃຊ້ອຳນາດແບບຜິດລະບຽບ ແລະ ກົດໝາຍ ເພື່ອເອື້ອປະໂຫຍດໃຫ້ແກ່ຕົນ ແລະ ຍາດພີ່ນ້ອງຂອງຕົນ, ການກະທຳແບບນີ້ໄດ້ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງໃຫ້ແກ່ບຸກຄົນ, ສ່ວນລວມ ແລະ ປະເທດຊາດ, ເຫັນ ໄດ້ ຜົນສະທ້ອນອັນບໍ່ດີຄືແນວນີ້ ລັດຖະບານເຮົາຈຶ່ງຖືເອົາວຽກງານການຕ້ານການ ສໍ້ລາດບັງ

[1] ກົດໝາຍວ່າດ້ວຍການສໍ້ລາດບັງຫຼວງ, ສະບັບເລກທີ 21/ສພຊ, ລົງວັນທີ 18 ທັນວາ 2012, ມາດຕາ 16.

ຫຼວງ ເປັນບັນຫາສຳ ຄັນຄື: ທ້າມພະນັກງານ ໂດຍສະເພາະພະນັກງານທີ່ເປັນສະມາຊິກພັກໃຊ້ອຳນາດ ແລະ ໜ້າທີ່, ຕຳແໜ່ງໄປໃນ ທາງທີ່ຜິດຕໍ່ລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງດວົ້າໄດ້ວ່າ ການສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ແມ່ນການໃຊ້ຖານະຕຳແໜ່ງ, ສິດອຳນາດ, ທີ່ເກີນທີ່ລະບຽບກົດໝາຍໄດ້ກຳນົດໄວ້ ໂດຍເຈດຕະນາ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສຍຫາຍ ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ ກໍຄືຜູ້ລົງທຶນ.

ໂດຍທົ່ວໄປແລ້ວ ຫ້າມພະນັກງານຂອງລັດທີ່ຮັບຜິດຊອບກ່ຽວກັບການຄຸ້ມຄອງການລົງທຶນ ກໍຄືຜູ້ທີ່ມີຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ມີພຶດຕິກຳດັ່ງນີ້:

1) ຮັບເງິນ, ວັດຖຸສິ່ງຂອງ ຫຼື ຜົນປະໂຫຍດອື່ນໆ ຈາກບຸກຄົນ, ການຈັດຕັ້ງທີ່ກ່ຽວພັນກັບໜ້າທີ່ວຽກງານທີ່ຕົນຮັບຜິດຊອບ ຊຶ່ງອາດຈະສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ[2];

2) ສ້າງຄວາມຫຍຸ້ງຍາກ, ກົດໜ່ວງຖ່ວງດຶງ, ແຊກແຊງໃນການແກ້ໄຂວຽກງານໃດໜຶ່ງ ໂດຍສະເພາະໃນກິດຈະການເຄື່ອນໄຫວການລົງທຶນ;

3) ເປີດບັນຊີເງິນຝາກ ຢູ່ນອກ ສປປ ລາວ ໂດຍບໍ່ແຈ້ງໃຫ້ການຈັດຕັ້ງທີ່ກ່ຽວຂ້ອງຊາບ;

4) ເປັນທີ່ປຶກສາໃຫ້ແກ່ວິສາຫະກິດຂອງເອກະຊົນ ທີ່ພົວພັນເຖິງສິດຕົກລົງຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ;

5) ເປັນນາຍໜ້າໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງເພື່ອຜົນປະໂຫຍດສ່ວນຕົວເຊັ່ນ: ແລ່ນຄະດີ,ແລ່ນໂຄງການ,ຂໍໂກຕ້າ;

6) ໃຊ້ຖານະຕຳແໜ່ງເພື່ອກູ້ຢືມເງິນຂອງສ່ວນລວມທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ຜູ້ອື່ນ ຫຼື ຄ້ຳປະກັນໃຫ້ຜູ້ອື່ນໄປກູ້ຢືມເງິນຢູ່ທະນາຄານ;

7) ບັນຈຸ, ສັບຊ້ອນ ຫຼື ແຕ່ງຕັ້ງເມຍ ຫຼື ຜົວ, ລູກ ຫຼື ຍາດໃກ້ສິດຂອງຕົນເຂົ້າໃນຕຳແໜ່ງນຳພາໃນບາງຂົງເຂດວຽກງານທີ່ຕົນຮັບຜິດຊອບ ທີ່ຈະສ້າງເງື່ອນໄຂໃຫ້ມີການສໍ້ລາດບັງຫຼວງ ເຊັ່ນ: ວຽກງານຈັດຕັ້ງ, ວຽກງານກວດກາ, ການເງິນ-ການບັນຊີ, ຄັງເງິນ, ຮັກສາສາງ, ການຈັດຊື້-ຈັດຈ້າງ;

8) ຄອບຄອງ ຫຼື ນຳໃຊ້ເຮືອນ ຫຼື ທີ່ດິນຂອງລັດ, ລວມໝູ່ ໂດຍບໍ່ຖືກຕ້ອງເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

9) ເປີດເຜີຍຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ;

10) ນຳໃຊ້ເງິນ ຫຼື ຊັບສິນຂອງລັດ, ຂອງລວມໝູ່ ເພື່ອສັງສັນຊຸມແຊວ, ເອົາເປັນຂອງຂວັນ ຫຼື ແບ່ງປັນໃຫ້ພະນັກງານ ຫຼື ບຸກຄົນອື່ນນອກລະບຽບກົດໝາຍ;

11) ປາບປາມ, ນາບຂູ່, ກົດໜ່ວງຜູ້ກ່າວຟ້ອງ, ຜູ້ຕຳນິສິ່ງຂ່າວ ແລະ ຜູ້ສະເໜີລາຍງານຂໍ້ມູນດ້ານຫຍໍ້ທໍ້ຕ່າງໆກ່ຽວກັບຕົນ;

12) ແອບອ້າງຊື່ສຽງ, ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ຂອງຂັ້ນເທິງ ຫຼື ຂອງຜູ້ອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ.

---

[2] ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ສະບັບເລກທີ 03/ສພຊ, ລົງວັນທີ 19 ພຶດສະພາ 2005, ມາດຕາ 25.

ພະນັກງານຜູ້ໃດ ຫາກລະເມີດຂໍ້ຫ້າມທີ່ກ່າວມາຂ້າງເທິງນີ້ ຈະຖືກສຶກສາອົບຮົມ ຫຼື ປະຕິບັດວິໄນ; ໃນກໍລະນີການລະເມີດດັ່ງກ່າວນັ້ນ ຫາກເປັນການກະທຳຜິດທາງອາຍາຈະຖືກລົງໂທດຕາມກົດໝາຍ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**+ ຮັບສິນບົນຈາກຜູ້ລົງທຶນ ຫຼື ຜູ້ທີ່ຫວັງຜົນປະໂຫຍດຈາກການລົງທຶນ**

ການຮັບສິນບົນແມ່ນການທີ່ພະນັກງານຮັບເອົາ, ທວງເອົາ, ຂໍເອົາ ຫຼື ຕົກລົງຮັບເອົາເງິນ, ຊັບສິນຂອງ ຫຼື ຜົນປະໂຫຍດໜຶ່ງຈາກຜູ້ໃຫ້ສິນບົນໂດຍກົງ ຫຼື ທາງອ້ອມ ແລ້ວປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນການປະຕິບັດໜ້າທີ່ຂອງຕົນ ຕາມຈຸດປະສົງ ແລະ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ[3].

ການຮັບສິນບົນເປັນພະຍາດທີ່ກຳລັງລະບາດໃນກຸ່ມພະນັກງານລັດຈຳນວນໜຶ່ງ, ເປັນປະກົດການຫຍໍ້ທໍ້ທີ່ພັກ ແລະ ລັດຖະບານເຮົາໄດ້ຖືເປັນບັນຫາສຳ ຄັນໃນການກຳຈັດກຸ່ມຄົນເຫຼົ່ານີ້ໃຫ້ໝົດໄປຈາກສັງຄົມລາວ, ຜ່ານມາ ການຮັບສິນບົນຈາກຜູ້ລົງທຶນ ຫຼື ຜູ້ທີ່ຫວັງ ຜົນປະໂຫຍດຈາກການລົງທຶນຂອງພະນກງານລັດສ່ວນໃຫຍ່ ແມ່ນເກີດຈາກຂັ້ນທ້ອງຖິ່ນຈົນຮອດສູນກາງ, ເປັນຕົ້ນແມ່ນການອະນຸຍາດທີ່ຜິດກົດໝາຍ ແລະ ອື່ນໆ.

ການປະຕິບັດໜ້າທີ່ຂອງພະນັກງານທີ່ຂາດຈັນຍາບັນຍັງເປັນປາກົດການຫຍໍ້ທໍ້ທີ່ໄດ້ສົ່ງຜົນກະທົບຕໍ່ການຄຸ້ມຄອງການລົງທຶນ, ໂດຍສະເພາະແມ່ນການທຸຈະລິດ ແລະ ການຮັບເອົາສິນບົນນັ້ນຖືເປັນບັນຫາທີ່ເກີດຂຶ້ນຫຼາຍ.

ຈັນຍາບັນຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່ ແລະ ຄວາມເປັນເຈົ້າການ ໃນການບໍລິການຮັບໃຊ້ປະຊາຊົນຍັງບໍ່ທັນສູງ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກພະນັກງານຈຳນວນໜຶ່ງ ຍັງມີດ້ານເສື່ອມຖອຍການລະເມີດລະບຽບວິໄນຂອງພັກ, ກົດໝາຍຂອງລັດ, ການສວຍໃຊ້ຖານະຕຳແໜ່ງ, ອາດຍາສິດ, ສໍ້ລາດບັງຫຼວງ, ໃຫ້ ແລະ ຮັບສິນບົນຍັງມີຢູ່ໃນການຈັດຕັ້ງຂັ້ນຕ່າງໆ ອັນໄດ້ສົ່ງຜົນສະທ້ອນ ເຖິງບົດບາດການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດເຮົາບໍ່ໜ້ອຍ.

**+ ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຂອງຜູ້ລົງທຶນ**

ການຄຸ້ມຄອງເອກະສານກ່ຽວກັບການລົງທຶນ, ບາງເອກະສານຈຳເປັນຕ້ອງໄດ້ຮັບການສະຫງວນ ເພາະມັນ ກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມ ສະຫງົບສຸກຂອງສັງຄົມ, ຄວາມປອດໄພຂອງຜູ້ລົງທຶນໃນການດຳເນີນ ທຸລະກິດ ບັນດາເອກະສານເຫຼົ່ານີ້ເອີ້ນວ່າ ເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຂອງຜູ້ລົງທຶນ ຊຶ່ງພະນັກ ງານລັດເວົ້າລວມ, ເວົ້າສະເພາະກໍຄືພະນັກງານຄຸ້ມຄອງໃນຂະແໜງການລົງທຶນ ຈະຕ້ອງໄດ້ຮັກສາເປັນຄວາມລັບ, ພະນັກງານໃດລະເມີດຈະຖືວ່າມີຄວາມຜິດ (ອາດຈະຖືກປະຕິບັດວິໄນ ຫຼື ປະຕິບັດໂທດຕາມລະບຽບກົດໝາຍ).

**+ ແກ່ຍາວເວລາໃນການພິຈາລະນາເອກະສານຕ່າງໆ ໂດຍບໍ່ມີເຫດຜົນ ຫຼື ກົດໜ່ວງ ເອກະສານດັ່ງກ່າວຂອງຜູ້ລົງທຶນ**

ການແກ່ຍາວເວລາໃນການພິຈາລະນາເອກະສານດ້ານການລົງທຶນໂດຍບໍ່ມີເຫດຜົນຂອງພະນັກລັດ ສົ່ງຜົນສະທ້ອນໃນການກົດໜ່ວງເວລາດ້ານການລົງທຶນ ເຮັດໃຫ້ຜູ້ລົງທຶນຂາດຄວາມເຊື່ອໝັ້ນ, ຫຼຸດຜ່ອນການດຶງດູດການລົງທຶນ, ເຮັດໃຫ້ລັດຖະບານເສຍຜົນປະໂຫຍດ, ສັງຄົມຫາງສຽງບໍ່ດີໃຫ້ພາກລັດດ້ານການບໍລິຫານ, ການກະທຳດັ່ງກ່າວ

[3] ກົດໝາຍວ່າດ້ວຍການສໍ້ລາດບັງຫຼວງ, ສະບັບເລກທີ 21/ສພຊ, ລົງວັນທີ 18 ທັນວາ 2012, ມາດຕາ 15.

ນີ້ສ່ວນໃຫຍ່ເກີດຈາກພະນັກງານລັດທີ່ຂາດຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ຂອງຕົນ, ເຫັນຜົນປະໂຫຍດສ່ວນຕົວສູງກວ່າສ່ວນລວມ, ບາງຄັ້ງອາດນໍາໄປສູ່ການກະທໍາຜິດເຊັ່ນ: ຮັບເງິນໃຕ້ໂຕະ, ບໍ່ມີເງິນໃຫ້ກໍແກ່ຍາວເວລາໃນການພິຈາລະນາເອກະສານກ່ຽວກັບການລົງທຶນ,ພະນັກງານລັດທີ່ກະທໍາຜິດ(ອາດຈະຖືກປະຕິບັດວິໄນ ຫຼື ປະຕິບັດໂທດຕາມລະບຽບກົດໝາຍ).

**+ ມີການກະທໍາອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກໍານົດໄວ້ໃນລະບຽບກົດໝາຍ**

ນອກຈາກການກະທໍາທີ່ກ່າວມາຂ້າງ ເທິງນັ້ນ, ພະນັກງານລັດທີ່ມີການເຄື່ອນໄຫວອື່ນໆ ທີ່ຂັດກັບລະບຽບກົດໝາຍ ຂອງ ສປປ ລາວ ດ້ານການລົງທຶນ ແມ່ນຈະຖືກປະຕິບັດວິໄນ ຫຼື ຖືກລົງໂທດ ຕາມສະຖານໜັກເບົາທີ່ພະນັກງານລັດເປັນຜູ້ກໍ່ຂຶ້ນ.

"ບຸກຄົນໃດທີ່ລະເມີດກົດໝາຍສົ່ງເສີມການລົງທຶນ, ຂັດຂວາງທ່ວງດຶງເອກະສານ, ເມີນເສີຍຕໍ່ໜ້າທີ່ວຽກງານ ທີ່ຖືກມອບໝາຍຈະຖືກສຶກສາອົບຮົມວິໄນ ຫຼື ດໍາເນີນຄະດີຕາມລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ"[4].

**+ ຂໍ້ຫ້າມສໍາລັບເຈົ້າໜ້າທີ່ພາສີ**

ຫ້າມເຈົ້າໜ້າທີ່ພາສີມີພຶດຕິກໍາດັ່ງນີ້:

1) ກົດໜ່ວງທ່ວງດຶງ, ປອມແປງເອກະສານຕ່າງໆ, ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

2) ສວຍໃຊ້ໜ້າທີ່ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ຫຼື ຮັບສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງບຸກຄົນ, ລວມໝູ່, ລັດ ແລະ ການຈັດຕັ້ງ;

3) ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ດໍາເນີນທຸລະກິດ ກະທໍາຜິດຕໍ່ລະບຽບກົດໝາຍ;

4) ປອມແປງໃບແຈ້ງພາສີ, ໃບຮັບເງິນ ຫຼື ເອກະສານອື່ນ;

5) ນໍາເອົາເງິນຄ່າພາສີ ແລະ ພັນທະອື່ນທີ່ເກັບໄດ້ມານໍາໃຊ້ສ່ວນຕົວ;

6) ນໍາໃຊ້, ເຮັດໃຫ້ເປ່ເພ, ຕົກເຮ່ຍເສຍຫາຍ ຫຼື ຍັກຍອກເອົາຂອງກາງຄະດີທາງພາສີ;

7) ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍກ່ຽວກັບພາສີ[5]

**3. ຂໍ້ຫ້າມສໍາລັບຜູ້ລົງທຶນກ່ຽວກັບການລົງທຶນ**

ຜູ້ລົງທຶນນອກຈາກປະຕິບັດພັນທະຕໍ່ລັດຖະບານໃນເວລາເຄື່ອນໄຫວກິດຈະການລົງທຶນແລ້ວ ຜູ້ລົງທຶນຍັງຈໍາຕ້ອງປະຕິບັດບັນດາຂໍ້ຫ້າມຕາມລະບຽບການ ແລະ ກົດໝາຍທີ່ລັດຖະບານ ກໍຄືອົງການທີ່ມີສິດອໍານາດວາງອອກ ໃນແຕ່ລະໄລຍະ, ບັນດາຂໍ້ຫ້າມດັ່ງກ່າວນັ້ນອາດເວົ້າໄດ້ວ່າແມ່ນສິ່ງທີ່ຜູ້ລົງທຶນບໍ່ຄວນກະທໍາ ຫຼື ເຄື່ອນໄຫວຄື:

**+ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບວຽກງານທີ່ກ່ຽວຂ້ອງ**

ການໃຫ້ສິນບົນແມ່ນການສະເໜີໃຫ້, ເອົາໃຫ້ ຫຼື ສັນຍາວ່າຈະໃຫ້ເງິນ, ຊັບສິນ ຫຼື ຜົນປະໂຫຍດໃດໜຶ່ງດ້ວຍຕົນເອງ ຫຼື ຜ່ານສື່ກາງ ແກ່ພະນັກງານ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນການປະຕິບັດໜ້າທີ່ຂອງພະນັກງານ ເພື່ອຈຸດປະສົງ ແລະ ຜົນປະໂຫຍດຂອງຜູ້ໃຫ້ສິນບົນ.

---

[4] ດໍາລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນ, ມາດຕາ 68,ວັນທີ 1 ສະບັບເລກທີ119/ນຍ,ລົງວັນທີ 20ເມສາ 2011.

[5] ກົດໝາຍວ່າດ້ວຍພາສີ, ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011, ມາດຕາ 84.

ການໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບ ກ່ຽວກັບການລົງທຶນ ຫຼື ພາກສ່ວນກ່ຽວຂ້ອງ ຂອງຜູ້ລົງທຶນຖືວ່າມີຄວາມຜິດເຊັ່ນດຽວກັບພະນັກງານລັດທີ່ຮັບສິນບົນ, ການກະທຳແບບນີ້ມັກຈະເກີດຂຶ້ນ ລະຫວ່າງ ຜູ້ລົງທຶນທີ່ມີແນວຄິດເຮັດຜິດຫຼັກການໃນການລົງທຶນກັບພະນັກງານລັດທີ່ສົມຮູ້ຮ່ວມຄິດ ໃນການເຄື່ອນໄຫວການລົງທຶນ ທີ່ຜິດຫຼັກການ ແລະ ກົດໝາຍກຳນົດ. ຕົວຢ່າງ: ເອົາເງິນໃຫ້ເຈົ້າໜ້າທີ່ເພື່ອອະນຸມັດກິດຈະການ ສຳປະທານໃດໜຶ່ງທີ່ຜິດລະບຽບການ, ການຫຼົບຫຼີກເສຍພາສີ, ອາກອນອື່ນໆໂດຍບໍ່ຖືກຕ້ອງຕາມກົດໝາຍ...

**+ ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອຳລາຍຮັບ, ຜົນກຳໄລ ລວມທັງຕົວເລກການເສັຍພາສີ-ອາກອນ**

ພຶດຕິກຳການຫຼົບຫຼີກໃນການປະຕິບັດພັນທະຂອງຜູ້ລົງທຶນຖືເປັນພຶດຕິກຳທີ່ຂັດກັບຫຼັກການທີ່ວ່າຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ລະຫວ່າງຜູ້ລົງທຶນກັບລັດຖະບານ, ໃນຕົວຈິງມັກເກີດຂຶ້ນສ່ວນໃຫຍ່ຜູ້ລົງທຶນຈະປົດບັງລາຍຮັບ, ຜົນກຳໄລທີ່ເກີດຈາກການລົງທຶນຂອງຕົນເພື່ອຫຼົບຫຼີກການເສຍພາສີ-ອາກອນໃຫ້ແກ່ລັດ, ມີການປອມແປງເອກະສານທີ່ບໍ່ສອດຄ່ອງກັບຄວາມເປັນຈິງ ສິ່ງຜົນສະທ້ອນອັນໃຫຍ່ຫຼວງ ຕໍ່ກັບການເກັບລາຍຮັບດ້ານພາສີ-ອາກອນຂອງລັດ, ພ້ອມດຽວກັນນັ້ນ ກໍເປັນການເອົາລັດເອົາປຽບລັດຖະບານໃນດ້ານການຄຸ້ມຄອງການລົງທຶນ.

ນອກຈາກນັ້ນ, ໃນກົດໝາຍວ່າດ້ວຍພາສີ ຂອງ ສປປ ລາວ ຍັງໄດ້ກຳນົດຂໍ້ຫ້າມສຳລັບຜູ້ແຈ້ງພາສີ ກໍຄືຜູ້ລົງທຶນດັ່ງນີ້:

1) ທຳລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ແຈ້ງຂໍ້ມູນບໍ່ຖືກຕ້ອງ, ຫຼົບຫຼີກພາສີ;
2) ໃຫ້ສິນບົນ, ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ພາສີ;
3) ໝິ່ນປະໝາດ, ນາບຂູ່ ແລະ ທຳຮ້າຍຮ່າງກາຍເຈົ້າໜ້າທີ່ພາສີ;
4) ຮ່ວມມືໃນການປົກປິດ ແລະ ຊຸກຍູ້ການກະທຳ ທີ່ພົວພັນກັບການເສຍພາສີຂອງຜູ້ດຳເນີນທຸລະກິດ ກໍຄືຜູ້ລົງທຶນ;
5) ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍກ່ຽວກັບພາສີ.

**+ ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ**

ຜູ້ລົງທຶນຈຳນວນໜຶ່ງຍ້ອນບໍ່ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງລັດຖະບານກ່ຽວກັບການສົ່ງເສີມການລົງທຶນ ຫຼື ເຂົ້າໃຈແຕ່ຍ້ອນມີພະນັກງານລັດ ປະຕິບັດໜ້າທີ່ບໍ່ຖືກຕ້ອງ ແລະ ບໍ່ ເປັນທຳ ຈຶ່ງໄດ້ສວຍໂອກາດໂຈມຕີໃສ່ຮ້າຍປ້າຍສີການຈັດຕັ້ງໂດຍບໍ່ຊອກທາງອອກດ້ວຍລະບຽບກົດໝາຍ ຊຶ່ງມີການໂຄສະນາທັບຖົມໃສ່ຮ້າຍປ້າຍສີການຈັດ ຕັ້ງ ແລະ ພະນັກງານຂອງລັດກໍຖືວ່າເປັນການກະທຳຜິດ ຫຼື ລະເມີດຕໍ່ລະບຽບການໃນການລົງທຶນ.

**+ ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ**

ການກະທຳອື່ນທີ່ເປັນຂໍ້ຫ້າມກຳນົດໄວ້ ໃນກົດໝາຍທີ່ກ່ຽວຂ້ອງກັບການລົງທຶນເປັນຕົ້ນກົດໝາຍສົ່ງເສີມການລົງທຶນ, ກົດໝາຍວິສາຫະກິດ, ກົດໝາຍ ພາສີ-ອາກອນ, ກົດໝາຍແຮງງານ, ກົດໝາຍທີ່ດິນ, ກົດໝາຍສິ່ງແວດລ້ອມ , ກົດໝາຍທະນາຄານ...ຖ້າວ່າຜູ້ລົງ ທຶນລະເມີດກໍຖືວ່າມີຄວາມຜິດເຊັ່ນດຽວໃນຖານລະເມີດລະບຽບການ ໃນການເຄື່ອນໄຫວການລົງທຶນ.

ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ລະເມີດກົດໝາຍຂອງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະໄລຍະທີ່ປະກາດໃຊ້ໃນແຕ່ລະໄລຍະຈະຖືກຕັກເຕືອນ ແລະ ປະຕິບັດຕາມມາດຕະການດັ່ງນີ້:

- ຄັ້ງທີ 1 ຈະຖືກຕັກເຕືອນ, ສຶກສາອົບຮົມ ແລະ ແນະນຳ ໃຫ້ຈັດຕັ້ງປະຕິບັດຖືກຕ້ອງໂດຍມີບົດບັນທຶກເປັນລາຍ ລັກອັກສອນຄັກແນ່;

- ຄັ້ງທີ 2 ຈະຖືກປະຕິບັດມາດຕະການຕ່າງໆຕາມລະບຽບກົດໝາຍທີ່ກ່ຽວຂ້ອງທີ່ກຳນົດໄວ້ດັ່ງນີ້:

+ ວິສາຫະກິດທີ່ບໍ່ນຳໃຊ້ໃບເກັບເງິນ ຫຼື ໄດ້ນຳໃຊ້ແຕ່ບໍ່ຖືກຕ້ອງຕາມດຳລັດວ່າດ້ວຍໃບເກັບເງິນ; ບໍ່ຖືບັນຊີ ຫຼື ຖືບັນຊີບໍ່ຖືກຕ້ອງຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍບັນຊີ ແຫ່ງ ສປປ ລາວ ຈະຖືກປະຕິບັດມາດຕະການຕ່າງໆ ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍໃບເກັບເງິນ, ກົດໝາຍວ່າດ້ວຍບັນຊີ ແລະ ກົດໝາຍວ່າດ້ວຍ ສ່ວຍສາອາກອນ.

+ ໃນກໍລະນີທີ່ວິສາຫະກິດບໍ່ເສຍພັນທະຄົບຖ້ວນ, ຂະແໜງການເງິນ ຈະບໍ່ອອກໃບຢັ້ງຢືນການເສຍພັນທະ ແລະ ຈະບໍ່ຮັບຮອງເອົາແຜນການນຳໃຊ້ວັດຖຸດິບ, ອຸປະກອນເຄື່ອງຈັກ ແລະ ພາຫະນະຮັບໃຊ້ການຜະລິດ ທາງກົງໃຫ້ແກ່ ວິສາຫະກິດຈົນກວ່າວິສາຫະກິດດັ່ງກ່າວໄດ້ເສຍພັນທະຄົບຖ້ວນຕາມກົດໝາຍ. ຂະແໜງການ ເງິນມີສິດສະ ເໜີຂະແໜງແຜນການ ແລະ ການລົງທຶນ ຫຼື ຂະແໜງອຸດສາຫະກຳ ແລະ ການຄ້າສັ່ງໂຈະການ ເຄື່ອນໄຫວວິສາຫະກິດໄວ້ຊົ່ວຄາວ.

+ ວິສາຫະກິດເຄື່ອນໄຫວທຸລະກິດ ແຕ່ບໍ່ແຈ້ງເສຍອາກອນປະເພດຕ່າງໆທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ຂອງຕົນ ຫຼື ໄດ້ແຈ້ງເສຍແຕ່ບໍ່ຖືກຕ້ອງຕາມກຳນົດເວລາ ຫຼືບໍ່ຖືກຕ້ອງຕາມການເຄື່ອນໄຫວທຸລະກິດຕົວຈິງ ຊຶ່ງຂະ ແໜງການສ່ວຍສາອາກອນໄດ້ສຶກສາອົບຮົມ, ແນະນຳ, ຕັກເຕືອນ ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ອອກໃບເລັ່ງທວງການ ແຈ້ງເສຍອາກອນ ແລະ ອອກໃບເຕືອນການແຈ້ງເສຍອາກອນ ແຕ່ກໍຍັງບໍ່ມາແຈ້ງເສຍອາກອນຕະຫຼອດໄລຍະເວລາ 1 ປີ ຂະແໜງສ່ວຍສາອາກອນ ຈະສະເໜີໃຫ້ຂະແໜງແຜນການ ແລະ ການລົງທຶນ ຫຼື ຂະແໜງອຸດສາຫະກຳ ແລະ ການຄ້າ ຖອນໃບທະບຽນສຳປະທານ ຫຼື ໃບທະບຽນວິສາຫະກິດ.

ພາຍຫຼັງທີ່ໄດ້ຮັບການສະເໜີຈາກຂະແໜງການສ່ວຍສາອາກອນ, ຂະແໜງແຜນການ ແລະ ການລົງທຶນ ຫຼື ຂະ ແໜງອຸດສາຫະກຳ ແລະ ການຄ້າຈະພິຈາລະນາຖອນໃບທະບຽນສຳປະທານ ຫຼື ໃບທະບຽນວິສາຫະກິດພາຍໃນກຳນົດ1 ເດືອນ ຫຼື ຈະຖືກດຳເນີນຄະດີຕາມຂະບວນການຍຸຕິທຳ ແລ້ວແຕ່ກໍລະນີ[6].

**References:**


1. ກົດໝາຍສົ່ງເສີມການລົງທຶນ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ກົດໝາຍວ່າດ້ວຍພາສີ, ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011;
4. ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນ, ມາດຕາ 68,ວັນທີ 1 ສະບັບເລກທີ119/ນຍ,ລົງວັນທີ 20ເມສາ 2011;
5. ກົດໝາຍວ່າດ້ວຍການສໍ້ລາດບັງຫຼວງ, ສະບັບເລກທີ 21/ສພຊ, ລົງວັນທີ 18 ທັນວາ 2012;
6. ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ສະບັບເລກທີ 03/ສພຊ, ລົງວັນທີ 19 ພຶດສະພາ 2005.


[6] ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນ, ມາດຕາ 68,ວັກທີ2 ສະບັບເລກທີ 119/ນຍ,ລົງວັນທີ 20ເມສາ 2011